# ມິຊຊາວັນອາທິດທີ 1 ກຳນົດບຳເພັນສິນ
## ວັນທີ 26 ກຸມພາ 2023



**ພຣະວໍລະສານໂດຍນັກບຸນມັດເທວ 4, 1-11**

ໃນເວລານັ້ນ, ພຣະຈິດເຈົ້າໄດ້ພາພຣະເຢຊູເຈົ້າເຂົ້າທີ່ປ່ງວເພື່ອໃຫ້ຜີປີສາດມາຫລອກລວງ. ເມື່ອໄດ້ຊົງອົດອາຫານເປັນເວລາ 40 ມື້ 40 ຄືນແລ້ວ, ພຣະອົງກໍຮູ້ສຶກຫິວ, ແລະຜີປີສາດກໍເຂົ້າມາທູນພຣະອົງວ່າ: ຖ້າທ່ານແມ່ນບຸດຂອງພຣະເຈົ້າແລ້ວ ຈົ່ງສັ່ງບອກໃຫ້ກ້ອນຫີນເຫລົ່ານີ້ກາຍເປັນເຂົ້າຈີ່ເຖີດ. ພຣະອົງຊົງຕອບວ່າ: ພຣະຄຳພີໄດ້ກ່າວວ່າ: ມະນຸດມີຊີວິດຢູ່ໄດ້ບໍ່ແມ່ນຍ້ອນເຂົ້າຈີ່ເທົ່ານັ້ນ, ແຕ່ຍັງແມ່ນຍ້ອນວາຈາທີ່ພຣະເຈົ້າກ່າວອອກມາອີກດ້ວຍ. ແລ້ວຜີປີສາດກໍພາພຣະອົງໄປນະຄອນສັກສິດ, ໃຫ້ພຣະອົງປະທັບຢູ່ຈອມວິຫານແລະເວົ້າວ່າ: ຖ້າທ່ານແມ່ນບຸດຂອງພຣະເຈົ້າແລ້ວກໍໃຫ້ໂຕນລົງລຸ່ມເຖີດ. ຍ້ອນພຣະຄຳພີໄດ້ກ່າວວ່າ: ພຣະອົງຈະສັ່ງເທວະດາຂອງພຣະອົງມາອູ້ມຊູເຈົ້າໄວ້ ບໍ່ໃຫ້ຕີນເຈົ້າຕຳກ້ອນຫີນ. ພຣະເຢຊູເຈົ້າກ່າວຕອບວ່າ: ພຣະຄຳພີກໍຍັງໄດ້ກ່າວອີກວ່າ: ເຈົ້າບໍ່ຕ້ອງມາຫລອກລວງພຣະເຈົ້າຂອງເຈົ້າ. ຜີປີສາດຍັງໄດ້ພາພຣະອົງຂຶ້ນພູສູງທີ່ສຸດໜ່ວຍໜຶ່ງ ແລ້ວສຳແດງອານາຈັກຕ່າງໆຂອງໂລກ ພ້ອມກັບຄວາມສີວິໄລທຸກຢ່າງໃຫ້ພຣະອົງເຫັນແລ້ວເວົ້າວ່າ: ເຮົາຈະໃຫ້ທ່ານໝົດທຸກສິ່ງເຫລົ່ານີ້ ຖ້າຫາກວ່າທ່ານຂາບລົງນົບໄຫວ້ເຮົາ. ພຣະເຢຊູເຈົ້າຕອບວ່າ: ຊາຕານ ຈົ່ງໜີອອກໄປ. ຍ້ອນພຣະຄຳພີໄດ້ຂຽນໄວ້ວ່າ: ເຈົ້າຕ້ອງນົບໄຫວ້ພຣະເຈົ້າຂອງເຈົ້າ ແລະຮັບໃຊ້ພຣະອົງແຕ່ຜູ້ດຽວເທົ່ານັ້ນ. ຜີປີສາດເລີຍປະພຣະອົງໄປ. ພວກເທວະດາຈຶ່ງພາກັນມາຮັບໃຊ້ພຣະອົງ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ວັນນີ້ພວກເຮົາກ້າວເຂົ້າສູ່ອາທິດທີໜຶ່ງຂອງກຳນົດບຳເພັນສິນພ້ອມກັບພຣະກຣິສຕະຈັກພາຍໃຕ້ການນຳພາຂອງພຣະຈິດເຈົ້າ. ວັນນີ້, ພວກເຮົາພ້ອມກັບພຣະເຢຊູເຈົ້າເຂົ້າໃນທີ່ປ່ຽວພາຍໃຕ້ການນຳພາຂອງພຣະຈິດເຈົ້າເພື່ອປະເຊີນໜ້າກັບການປະຈົນຫລອກລວງຂອງຜີປີສາດ. ເມື່ອໄດ້ຍິນຄຳວ່າ: "ການປະຈົນຫລອກລວງ" ພວກເຮົາມັກຈະມີຄວາມຢ້ານກົວ. ແນ່ນອນ, ການປະຈົນຫລອກລວງຈະເປັນສິ່ງໜ້າຢ້ານກົວແລະທຳໃຫ້ພວກເຮົາຕົກໃນບາບໄດ້ຖ້າພວກເຮົາບໍ່ເພິ່ງອີງພຣະເຈົ້າແລະເຊື່ອໝັ້ນໃນວາຈາຂອງພຣະອົງ.

ໃນບົດອ່ານທີໜຶ່ງວັນນີ້, ພຣະກຣິສຕະຈັກໄດ້ໃຫ້ພວກເຮົາຟັງແລະລຳເພິງເຖິງເຫດການຊຶ່ງນາງເອວາຖືກງູຫລອກລວງໃນສວນສະຫວັນ. ເຫດການນີ້ໄດ້ເລີ່ມຕົ້ນດ້ວຍການສົນທະນາລະຫວ່າງນາງເອວາກັບງູ. ງູໄດ້ໃຊ້ຄຳເວົ້າທີ່ກົງກັນຂ້າມກັບວາຈາພຣະເຈົ້າເພື່ອຫລອກລວງນາງເອວາໂດຍເວົ້າວ່າ: "ແມ່ນແທ້ບໍວ່າ, ພຣະເຈົ້າຫ້າມພວກເຈົ້າບໍ່ໃຫ້ກິນໝາກໄມ້ທຸກຢ່າງໃນສວນສະຫວັນນີ້?". ແນ່ນອນ, ພວກເຮົາຮູ້ຈັກຄຳເວົ້າຂອງພຣະເຈົ້າທີ່ກ່າວກັບອາດາມແລະເອວາວ່າ: "ພວກເຈົ້າສາມາດກິນໝາກໄມ້ທຸກຊະນິດໃນສວນນີ້ໄດ້ ຍົກເວັ້ນຕົ້ນໄມ້ທີ່ທຳໃຫ້ຮູ້ຈັກຄວາມດີແລະຄວາມຊົ່ວ ຍ້ອນວ່າເມື່ອກິນໝາກໄມ້ນີ້ແລ້ວພວກເຈົ້າຈະຮູ້ຈັກຄວາມຕາຍ" (ປຖກ 2, 16-17). ແຕ່ງູເວົ້າກົງກັນຂ້າມກັບວາຈາພຣະເຈົ້າອີກວ່າ: "ພວກເຈົ້າຈະບໍ່ຕາຍດອກ..". ສຸດທ້າຍ, ນາງເອວາກໍຕົກຢູ່ໃນການຫລອກລວງຂອງງູຍ້ອນນາງບໍ່ເຊື່ອໝັ້ນໃນວາຈາພຣະເຈົ້າ. ບົດເລື່ອງນີ້ຢາກສອນພວກເຮົາຫຍັງ? ມີສິ່ງໜຶ່ງທີ່ພວກເຮົາສາມາດຖອດຖອນເປັນບົດຮຽນໄດ້ນັ້ນຄື ວາຈາພຣະເຈົ້າເປັນວາຈາແຫ່ງຄວາມຈິງແລະຊີວິດ. ສ່ວນຄຳເວົ້າຂອງຜີປີສາດເປັນຄຳເທັດທີ່ກົງກັນຂ້າມກັບວາຈາພຣະເຈົ້າ, ກັບຄວາມຈິງ. ຍ້ອນອາດາມແລະເອວາບໍ່ເຊື່ອຟັງວາຈາພຣະເຈົ້າຈຶ່ງຕົກຢູ່ໃນບາບ. ພຣະເຢຊູເຈົ້າ, ປຽບເໝືອນອາດາມຄົນໃໝ່ໄດ້ເຊື່ອໝັ້ນໃນວາຈາຂອງພຣະບິດາ. ດັ່ງທີ່ພວກເຮົາໄດ້ຟັງໃນພຣະວໍລະສານວັນນີ້. ໃນທີ່ປ່ຽວ, ຜີປີສາດກໍໃຊ້ວິທີດຽວຄືການກ່າວຄຳເທັດກົງກັນຂ້າມກັບຄວາມຈິງກ່ຽວກັບພຣະບຸກຄົນຂອງພຣະເຢຊູເຈົ້າ. ຜີປີສາດທູນພຣະເຢຊູເຈົ້າວ່າ: " ຖ້າທ່ານແມ່ນບຸດຂອງພຣະເຈົ້າ...". ໃນພຣະວໍລະສານ, ນອກຈາກພວກລູກສິດ, ພວກຟາຣີເຊວແລະຝູງຊົນ, ມີຜູ້ໜຶ່ງທີ່ຮູ້ຈັກວ່າພຣະເຢຊູແມ່ນພຣະບຸດພຣະເຈົ້າແທ້ນັ້ນຄືຜີປີສາດ. ແຕ່ວັນນີ້ຜີປີສາດພັດເວົ້າກົງກັນຂ້າມກັບຄວາມຈິງເພື່ອຫລອກລວງພຣະເຢຊູເຈົ້າ. ແທນທີ່ພຣະອົງຈະຕອບຜີປີສາດໂດຍຕົງວ່າ: ເຮົາແມ່ນພຣະບຸດພຣະເຈົ້າແທ້. ພຣະອົງພັດໃຊ້ວາຈາພຣະເຈົ້າເພື່ອຕອບຄືນຜີປີສາດ. ໃນທີ່ສຸດ, ຜີປີສາດກໍຍອມແພ້ແລະໜີໄປ. ສິ່ງນີ້ຢາກສອນພວກເຮົາຫຍັງ? ສິ່ງທຳອິດທີ່ຢາກສອນພວກເຮົາຄື: ບໍ່ມີມານຮ້າຍໃດໃນໂລກນີ້, ບໍ່ມີຄວາມເທັດໃດໃນຊີວິດນີ້ສາມາດຊະນະວາຈາພຣະເຈົ້າອັນເປັນວາຈາແຫ່ງຄວາມຈິງແລະຊີງຊີວິດໄດ້. ສິ່ງທີສອງທີ່ພວກເຮົາສາມາດຖອດຖອນເປັນບົດຮຽນໄດ້ນັ້ນຄື ພຣະເຢຊູເຈົ້າຜູ້ຊຶ່ງພວກເຮົາເຊື່ອໄດ້ຊະນະຜີປີສາດແລ້ວ, ຊະນະການປະຈົນຫລອກລວງແລ້ວ. ຖ້າພວກເຮົາຢາກຊະນະການປະຈົນຫລອກລວງແລະສິ່ງຊົ່ວຮ້າຍທັງຫລາຍໃຫ້ພວກເຮົາເຊື່ອໝັ້ນໃນພຣະເຢຊູເຈົ້າ. ເພາະພຣະອົງເປັນບ່ອນເພິ່ງອີງແລະເປັນຄວາມຊ່ວຍເຫລືອຂອງພວກເຮົາ.

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດຊ່ວຍລູກໃຫ້ດຳລົງຊີວິດໃນກຳນົດບຳເພັນສິນນີ້ດ້ວຍຄວາມເຊື່ອໝັ້ນໃນວາຈາພຣະອົງ. ເພາະວາຈາພຣະອົງເປັນຄວາມຈິງແລະຊີວິດ. ໂຜດຊ່ວຍລູກໃຫ້ຢູ່ໃນຄວາມຈິງຂອງພຣະອົງສະເໝີ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ